ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 0 6 8 0 /ຈນວ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2018

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ ຢາປາບສັດຕູພືດ

- ອີງຕາມ ກົດໝາຍວ່າດ້ວຍ ການປ້ອງກັນ ແລະ ການກັກກັນພືດ ສະບັບເລກທີ 031/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ,ລົງວັນທີ14 /12/ 2015;
- ອີງຕາມດຳລັດວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
- ອີງຕາມມະຕິຕົກລົງ ຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ, ຊຸດທີ I, ສະບັບເລກທີ 06 ພະຈິກ 2017 ວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບ ພືດ ແລະ ຜະລິດຕະພັນພືດຢູ່ໃນນະຄອນຫຼວງວຽງຈັນ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ເປັນການຜັນຂະຫຍາຍວິໄສທັດ ແລະ ນະໂຍບາຍຂອງລັດຖະບານໃນການພັດທະ ນາກະສິກຳສະອາດ ຕາມທິດ ສີຂຽວ ແລະ ຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ແລະ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກພືດ ໃນການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ ທົ່ວນະຄອນຫຼວງວຽງຈັນ ເພື່ອຮັບປະກັນຄວາມປອດໄພໃຫ້ຄົນ, ສັດ, ພືດ, ແລະ ຍັບຍັ້ງການເຊື່ອມໂຊມດ້ານສິ່ງແວດລ້ອມ.

### ມາດຕາ 2 ນິຍາມ

ການຄຸ້ມຄອງຢາປາບສັດຕູພືດ ແມ່ນການຈັດຕັ້ງປະຕິບັດມາດຕະການກ່ຽວກັບການນຳໃຊ້ ແລະ ດຳເນີນທຸລະກິດຢາປາບສັດຕູພືດໃຫ້ຖືກຕ້ອງຕາມເຕັກນິກວິຊາການເພື່ອຮັບປະກັນຄວາມປອດໄພຕໍ່ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ສັງຄົມ.

ມາດຕາ 3 ອະທິບາຍຄຳສັບ

1. ແມ່ນປະຕິບັດຕາມມາດຕາ 3 ຂອງດຳລັດວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;

2. ເພີ່ມເຕີມ:

– **ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ** ໝາຍເຖິງ: ພະນັກງານວິຊາການປູກຝັງ ຊຶ່ງຖືກແຕ່ງຕັ້ງຢ່າງເປັນທາງການ ຈາກພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ໃຫ້ປະຕິບັດວຽກງານກວດກາຢາປາບສັດຕູພືດ ຢູ່ ຂັ້ນແຂວງ ແລະ ຂັ້ນເມືອງ;

**ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ** ໝາຍເຖິງ: ພະນັກງານທີ່ຖືກແຕ່ງຕັ້ງຢ່າງເປັນທາງການ ຈາກ ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າເມືອງ ຕາມລຳດັບ ປະກອບດ້ວຍ ກະສິກຳ ແລະ ປ່າໄມ້ , ປ້ອງກັນຄວາມສະຫງົບ, ອຸດສາຫະກຳ ແລະ ການຄ້າ, ສາທາລະນະສຸກ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນຕາມທີ່ລະບຸໄວ້ໃນມາດຕາ 57 ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 ໃນການປະຕິບັດມາດຕະການຜູ້ລະເມີດ ຕໍ່ລະບຽບການ ແລະ ກົດໝາຍຕ່າງໆທີ່ກ່ຽວຂ້ອງ ໃນການຄຸ້ມຄອງຢາປາບສັດຕູພືດ.

ມາດຕາ 4 ນະໂຍບາຍຂອງນະຄອນຫຼວງວຽງຈັນກ່ຽວກັບການຄຸ້ມຄອງຢາປາບສັດຕູພືດ

ນະຄອນຫຼວງວຽງຈັນ ເຫັນຄວາມສຳຄັນ ແລະ ເອົາໃຈໃສ່ວຽກງານຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດຕາມນະໂຍບາຍຂອງລັດຖະບານທີ່ລະບຸໄວ້ໃນມາດຕາ 4 ຂອງດຳລັດວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດສະ ບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;

ພ້ອມດຽວກັນນັ້ນ ນະຄອນຫຼວງວຽງຈັນ ກໍ່ໄດ້ຊຸກຍູ້ສົ່ງເສີມການຜະລິດ ແລະ ນຳໃຊ້ຢາສະໝຸນໄພ, ນ້ຳໝັກຊີວະພາບເພື່ອປ່ຽນແທນການນຳໃຊ້ຢາເຄມີ, ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ທົດແທນການນຳເຂົ້າຢາປາບສັດຕູພືດຈາກຕ່າງປະເທດ.

ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ທົ່ວໄປ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທົ່ວໄປທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຈຳໜ່າຍ (ຂາຍ) ແລະ ນຳໃຊ້ຢາປາບສັດຕູພືດ ຢູ່ນະຄອນຫຼວງວຽງຈັນ;

## ໝວດທີ 2

## ຢາປາບສັດຕູພືດທີ່ອະນຸຍາດໃຫ້ນຳໃຊ້ ແລະ ຫ້າມນຳໃຊ້

ມາດຕາ 6 ຢາປາບສັດຕູພືດທີ່ອະນຸຍາດໃຫ້ນຳໃຊ້

ຢາປາບສັດຕູພືດທີ່ອະນຸຍາດໃຫ້ນຳໃຊ້ໝາຍເຖິງຢາປາບສັດຕູພືດທີ່ເປັນອັນຕະລາຍບໍ່ເປັນພິດກະທັນຫັນ, ອັນຕະລາຍໜ້ອຍ, ອັນຕະລາຍປານກາງ ແລະ ຕ້ອງເປັນຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການນຳກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ປະກາດນຳໃຊ້ເປັນແຕ່ລະໄລຍະ (ລາຍລະອຽດມີບັນຊີລາຍຊື່ຢາຄັດຕິດ).

ມາດຕາ 7 ຢາປາບສັດຕູພືດທີ່ຫ້າມນຳໃຊ້

ຢາປາບສັດຕູພືດທີ່ຫ້າມນຳໃຊ້ ໝາຍເຖິງ ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ, ເປັນຢາປາບສັດຕູພືດທີ່ຖືກຫ້າມຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ການເຄື່ອນໄຫວອື່ນ ເພື່ອປົກປ້ອງສຸຂະພາບ

ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ລວມໄປເຖິງຢາປາບສັດຕູພືດທີ່ຖືກຍົກເລີກ ແລະ ລົບຊື່ອອກຈາກບັນຊີອະນຸຍາດນຳໃຊ້ໃນ ສປປລາວ, ມິຖຸນາ 2010 ຈຳນວນ 55 ຊະນິດ (ມີບັນຊີລາຍຊື່ຄັດຕິດ).

**ມາດຕາ 8 ເງື່ອນໄຂການນຳໃຊ້ຢາປາບສັດຕູພືດ**

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ຢາປາບສັດຕູພືດໃຫ້ປະຕິບັດຕາມມາດຕາ 34 ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;

2. ເພີ່ມເຕີມ:

- ມີຄວາມຮູ້ ຫຼື ປະສົບການ ໃນການນຳໃຊ້ຢາປາບສັດຕູພືດມາກ່ອນ;
- ບັນທຶກການຊື້, ການນຳໃຊ້ ຢາປາບສັດຕູພືດ ທຸກໆຄັ້ງ.
- ມີສຸຂະພາບແຂງແຮງ, ບໍ່ເສຍຈິດ ແລະ ບໍ່ມີປະຫວັດເສບຢາເສບຕິດ.

## ໝວດທີ 3
## ການຈຳໜ່າຍ (ຂາຍ) ຢາປາບສັດຕູພືດ

**ມາດຕາ 9 ເງື່ອນໄຂການຈຳໜ່າຍ (ຂາຍ) ຢາປາບສັດຕູພືດ**

1. ປະຕິບັດຕາມມາດຕາ 33 ແລະ 42 ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;

2. ເພີ່ມເຕີມ:

- ຕ້ອງມີໃບອະນຸຍາດຈຳໜ່າຍ (ຂາຍ) ຢາປາບສັດຕູພືດ ຈາກ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ.

**ມາດຕາ 10 ການປະກອບເອກະສານເພື່ອຂໍອະນຸຍາດຈຳໜ່າຍ (ຂາຍ) ຢາປາບສັດຕູພືດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຕ້ອງການຈຳໜ່າຍ (ຂາຍ) ຢາປາບສັດຕູພືດ ຕ້ອງປະກອບເອກະສານສະເໜີຕໍ່ ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເພື່ອອະນຸມັດ ດັ່ງມີລາຍລະອຽດລຸ່ມນີ້:

1. ໃບຄຳຮ້ອງຂໍອະນຸຍາດ ຈຳໜ່າຍ (ຂາຍ) ໂດຍເຊັນຢັ້ງຢືນຜ່ານຫ້ອງການກະສິກຳ ແລະ ປ່າໄມ້ເມືອງກ່ຽວຂ້ອງ;
2. ໃບທະບຽນວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
3. ໃບຢັ້ງຢືນ ການຝຶກອົບຮົມ ຫຼື ໃບປະກາດວິຊາຊີບທີ່ກ່ຽວພັນກັບຢາປາບສັດຕູພືດ;

**ມາດຕາ 11 ຂັ້ນຕອນການຂໍອະນຸຍາດຈຳໜ່າຍ (ຂາຍ) ຢາປາບສັດຕູພືດ**

1. ພາຍໃຫ້ທີ່ປະກອບເອກະສານຄົບຕາມທີ່ລະບຸໄວ້ໃນມາດຕາ 10 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ຍື່ນເອກະສານນຳ ໜ່ວຍງານປະຕູດຽວ ຂອງ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;

2. ພາຍຫຼັງໜ່ວຍງານປະຕູດຽວໄດ້ຮັບເອກະສານແລ້ວ, ຜູ້ຮັບຜິດຊອບຈະກວດກາເອກະສານ, ຖ້າເອກະສານຖືກຕ້ອງແມ່ນຈະໄດ້ສົ່ງຕໍ່ໃຫ້ ຂະແໜງປູກຝັງ, ກໍລະນີບໍ່ຖືກຕ້ອງແມ່ນຈະໄດ້ສົ່ງກັບຄືນ;

3. ຂະແໜງປູກຝັງໄດ້ຮັບເອກະສານ ແລະ ປະສານສົມທົບກັບໜ່ວຍງານປູກຝັງເມືອງ, ຜູ້ຮ້ອງຂໍ ລົງກວດກາສະຖານຈຳໜ່າຍ (ຂາຍ) ຕົວຈິງ ແລະ ເຮັດບົດບັນທຶກ ພ້ອມລາຍງານ.

4. ກໍລະນີ ສະຖານທີ່ຈຳໜ່າຍ (ຂາຍ) ຖ້າຫາກຖືກຕ້ອງຕາມເງື່ອນໄຂລະບຽບການ, ຂະແໜງປູກຝັງຈະອອກໃບອະນຸຍາດໃຫ້, ແຕ່ຫາກບໍ່ຖືກຕ້ອງ ກໍ່ຈະປະຕິເສດການອອກໃບອະນຸຍາດ ແລະ ນຳສົ່ງເອກະສານຄືນ.

### ມາດຕາ 12 ໄລຍະເວລາການອະນຸມັດ

ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ໄດ້ຮັບຄຳຮ້ອງເອກະສານ ແລະ ຈະໄດ້ຄົ້ນຄວ້າເອກະສານເປັນເວລາ 5 ວັນທາງລັດຖະການ ນັບຕັ້ງແຕ່ວັນໄດ້ຮັບເອກະສານຖືກຕ້ອງ.

### ມາດຕາ 13 ສິດ ແລະ ພັນທະ ຂອງຜູ້ຈຳໜ່າຍ (ຂາຍ) ຢາປາບສັດຕູພືດ

1. ປະຕິບັດຕາມມາດຕາ 46 ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017.

2. ເພີ່ມເຕີມ:

– ບັນທຶກການນຳເຂົ້າ, ການຈຳໜ່າຍ (ຂາຍ) ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງກັບການຈຳໜ່າຍຢາປາບສັດຕູພືດ.

## ໝວດທີ 4
## ລະບຽບການນຳເຂົ້າຢາປາບສັດຕູພືດ

### ມາດຕາ 14 ເງື່ອນໄຂຜູ້ນຳເຂົ້າ

ປະຕິບັດຕາມມາດຕາ 29, 33 ແລະ 42 ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017.

### ມາດຕາ 15 ການປະກອບເອກະສານການນຳເຂົ້າຢາປາບສັດຕູພືດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າຢາປາບສັດຕູພືດ ເພື່ອຈຳໜ່າຍ ແລະ ນຳໃຊ້ຕ້ອງປະກອບເອກະສານ ດັ່ງມີລາຍລະອຽດລຸ່ມນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ;
2. ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ທີ່ລະບຸເຖິງກິດຈະກຳການນຳເຂົ້າປັດໃຈການຜະລິດ);
3. ໃບອະນຸຍາດຈຳໜ່າຍ (ຂາຍ) ຢາປາບສັດຕູພືດ;
4. ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ;
5. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າ;
6. ໃບຢັ້ງຢືນຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດຈາກປະເທດຕົ້ນທາງ;

7. ແຜນນຳເຂົ້າຢາປາບສັດຕູພືດປະຈຳປີ.

**ມາດຕາ 16 ຂັ້ນຕອນການຂໍອະນຸຍາດນຳເຂົ້າ**

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບເອກະສານຄົບຕາມທີ່ລະບຸໄວ້ໃນມາດຕາທີ 15 ຂອງຂໍ້ຕົກລົງສະບັບນີ້ໃຫ້ຍື່ນເອກະສານນຳໜ່ວຍງານປະຕູດຽວຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;

2. ພາຍຫຼັງໜ່ວຍງານປະຕູດຽວໄດ້ຮັບເອກະສານແລ້ວ, ຜູ້ຮັບຜິດຊອບຈະກວດກາເອກະສານ, ຖ້າເອກະສານຖືກຕ້ອງແມ່ນຈະໄດ້ສົ່ງຕໍ່ໃຫ້ ຂະແໜງປູກຝັງ, ກໍລະນີບໍ່ຖືກຕ້ອງແມ່ນຈະໄດ້ສົ່ງກັບຄືນ;

3. ຂະແໜງປູກຝັງໄດ້ຮັບເອກະສານ ແລະ ຄົ້ນຄ້ວາ ພ້ອມປະກອບຄຳເຫັນດ້ານວິຊາການ.

4. ຖ້າຫາກຖືກຕ້ອງຕາມເງື່ອນໄຂລະບຽບການ, ຂະແໜງປູກຝັງ ຈະສະເໜີ ພະແນກ ກະສິກຳ ແລະ ປ່າໄມ້ ອອກໃບອະນຸຍາດນຳເຂົ້າ, ແຕ່ຫາກບໍ່ຖືກຕ້ອງ ກໍ່ຈະປະຕິເສດການອອກໃບອະນຸຍາດ ແລະ ນຳສົ່ງເອກະສານຄືນ.

**ມາດຕາ 17 ວັນເວລາທີ່ອະນຸຍາດເອກະສານ**

ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ໄດ້ຮັບຄຳຮ້ອງເອກະສານຂໍນຳເຂົ້າຢາປາບສັດຕູພືດຈາກຜູ້ປະກອບການ ຈະຕ້ອງຄົ້ນຄວ້າເອກະສານເປັນເວລາ 5 ວັນທາງລັດຖະການ ນັບຕັ້ງແຕ່ວັນໄດ້ຮັບເອກະສານຖືກຕ້ອງ.

**ມາດຕາ 18 ການແຈ້ງເອກະສານເວລານຳເຂົ້າ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ, ອົງການຈັດຕັ້ງສາກົນ ພາຍຫຼັງທີ່ໄດ້ໃບອະນຸຍາດນຳເຂົ້າຢາປາບສັດຕູພືດຈາກພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ກ່ອນທີ່ຈະນຳເຂົ້າຕ້ອງໄດ້ແຈ້ງເອກະສານນຳເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຫຼື ເຈົ້າໜ້າທີ່ປ້ອງກັນພືດ ແລະ ກັກກັນພືດ ປະຈຳດ່ານກ່ອນ 01 ວັນ, ຂັ້ນຕອນການແຈ້ງເອກະສານ ມີດັ່ງນີ້:

1. ແຈ້ງເອກະສານດ້ວຍຕົນເອງ;
2. ແຈ້ງເອກະສານຜ່ານທາງອີເມວ (Email) ກໍ່ໄດ້;
3. ເຈົ້າໜ້າທີ່ປະຈຳດ່ານຕ້ອງກວດກາເອກະສານລະອຽດ;
4. ນຳເຂົ້າຢາປາບສັດຕູພືດທີ່ຂໍອະນຸຍາດນຳເຂົ້າ.

**ມາດຕາ 19 ດ່ານນຳເຂົ້າ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ, ອົງການຈັດຕັ້ງສາກົນ ທີ່ມີຈຸດປະສົງຈະນຳເຂົ້າຢາປາບສັດຕູພືດເພື່ອຈຳໜ່າຍ ແລະ ນຳໃຊ້ຢູ່ນະຄອນຫຼວງວຽງຈັນ ຕ້ອງນຳເຂົ້າຜ່ານດ່ານສາກົນເທົ່ານັ້ນເຊັ່ນ:

- ດ່ານສາກົນຂົວມິດຕະພາບ ລາວ-ໄທ 1;
- ດ່ານສະໜາມບິນສາກົນວັດໄຕ;
- ດ່ານສາກົນສະຖານີລົດໄຟທ່ານາແລ້ງ.

## ໝວດທີ 5
## ອົງການຄຸ້ມຄອງ ແລະ ການກວດກາຢາປາບສັດຕູພືດ

### ມາດຕາ 20 ອົງການຄຸ້ມຄອງຢາປາບສັດຕູພືດໃນນະຄອນຫຼວງວຽງຈັນ

ປະຕິບັດຕາມມາດຕາ 52 ຂອງດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 ຄື:

- ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ຂັ້ນ ນະຄອນຫຼວງວຽງຈັນ;
- ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ຂັ້ນ ເມືອງ;
- ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ຂັ້ນ ບ້ານ.

### ມາດຕາ 21 ໂຄງປະກອບຂອງຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ

ໂຄງປະກອບຂອງຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ປະກອບດ້ວຍ ພາກສ່ວນກະສິກຳ ແລະ ປ່າໄມ້ ເປັນຫົວໜ້າຄະນະ, ພາກສ່ວນປ້ອງກັນຄວາມສະຫງົບເປັນຮອງ, ພາກສ່ວນອຸດສາຫະກຳ ແລະ ການຄ້າ ເປັນຮອງ ແລະ ມີຄະນະປະກອບດ້ວຍຜູ້ຕາງໜ້າຈາກ ສາທາລະນະສຸກ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນຕາມທີ່ລະບຸໄວ້ໃນມາດຕາ 57 ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017.

### ມາດຕາ 22 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງຢາປາບສັດຕູພືດຂັ້ນນະຄອນຫຼວງວຽງຈັນ

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງຢາປາບສັດຕູພືດ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນເຂົ້າໃຈ ແລະ ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ລົງກວດກາສະຖານທີ່ຜະລິດ, ຮ້ານຈຳໜ່າຍ, ສາງເກັບມຽ້ນ, ການໂຄສະນາ, ການນຳເຂົ້າ, ການຂົນສົ່ງ ການສົ່ງອອກ ແລະ ສະຖານທີ່ການນຳໃຊ້ຢາປາບສັດຕູພືດທີ່ເຫັນວ່າບໍ່ຖືກຕ້ອງຕາມລະບຽບການ;
4. ແນະນຳ, ກ່າວເຕືອນ, ປັບໃໝ ແລະ ຍຶດຂອງກາງ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບລະບຽບຫຼັກການ ແລະ ກົດໝາຍທີ່ກ່ຽວຂ້ອງ;
5. ຍຶດຢາປາບສັດຕູພືດ, ອຸປະກອນການນຳໃຊ້ຢາປາບສັດຕູພືດຕ້ອງຫ້າມ ແລະ ເອກະສານທີ່ກ່ຽວຂ້ອງກັບການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ພ້ອມທັງລາຍງານໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ເພື່ອນຳໃຊ້ມາດຕະການທຳລາຍ ຫຼື ສົ່ງກັບຄືນຢາປາບສັດຕູພືດຕ້ອງຫ້າມດັ່ງກ່າວຕາມແຕ່ລະກໍລະນີ;
6. ປະຕິບັດການປັບໃໝຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວກັບວຽກງານຢາປາບສັດຕູພືດພ້ອມທັງແຈ້ງເຕືອນຜູ້ລະເມີດ;
7. ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕ່າງໆທີ່ຈຳເປັນ ເປັນຕົ້ນ ການສັ່ງໃຫ້ຢຸດລົດເພື່ອກວດຄົ້ນ ຫຼື ເຂົ້າໄປໃນສະຖານທີ່ໃດໜຶ່ງທີ່ສົງໄສ ຫຼື ເປົ້າໝາຍວ່າມີການລະເມີດກົດໝາຍ

ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ລວມທັງຢຶດຂອງກາງ ຫຼື ຢາປາບສັດຕູພືດຕ້ອງຫ້າມໄວ້ໃນການຄອບຄອງ;

8. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາເອກະສານ ແລະ ກວດກາເອກະສານ ແລະ ຄຳໃຫ້ການເບື້ອງຕົ້ນ ທີ່ເຫັນວ່າມີການລະເມີດລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;

9. ສຶກສາອົບຮົມຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;

10. ສະຫຼຸບຜົນກວດກາ ແລະ ປະກອບເອກະສານ ສົ່ງໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຂັ້ນຕົ້ນ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ເພື່ອແກ້ໄຂ ຫຼື ດຳເນີນຄະດີ ຕາມກົດໝາຍ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

ມາດຕາ 23 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງຢາປາບສັດຕູພືດຂັ້ນເມືອງ

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງຢາປາບສັດຕູພືດ;

2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນເຂົ້າໃຈ ແລະ ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

3. ລົງກວດກາສະຖານທີ່ຜະລິດ, ຮ້ານຈຳໜ່າຍ, ສາງເກັບມຽ້ນ, ການໂຄສະນາ, ການນຳເຂົ້າ, ການຂົນສົ່ງ ການສົ່ງອອກ ແລະ ສະຖານທີ່ການນຳໃຊ້ຢາປາບສັດຕູພືດທີ່ເຫັນວ່າບໍ່ຖືກຕ້ອງຕາມລະບຽບການ;

4. ແນະນຳ, ກ່າວເຕືອນ, ປັບໃໝ ແລະ ຢຶດຂອງກາງ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບລະບຽບຫຼັກການ ແລະ ກົດໝາຍທີ່ກ່ຽວຂ້ອງຂັ້ນເມືອງຂອງຕົນ;

5. ບັນທຶກຂໍ້ມູນການເຄື່ອນໄຫວວຽກງານເຊັ່ນ: ຜູ້ນຳເຂົ້າ, ຜູ້ຈຳໜ່າຍ ແລະ ຜູ້ນຳໃຊ້ຂັ້ນເມືອງຂອງຕົນ.

ມາດຕາ 24 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງຢາປາບສັດຕູພືດຂັ້ນບ້ານ

1. ໂຄສະນາ, ແນະນຳຂໍ້ມູນຂ່າວສານ ແລະ ເຕັກນິກການນຳໃຊ້ຢາປາບສັດຕູພືດໃຫ້ປະຊາຊົນເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

2. ເຂົ້າຮ່ວມຕິດຕາມ ແລະ ກວດກາການນຳໃຊ້ຢາປາບສັດຕູພືດສິ່ງເສດເຫຼືອຢາປາບສັດຕູພືດ ແລະ ຜົນກະທົບທີ່ເກີດຂຶ້ນ;

3. ຕ້ານ ແລະ ສະກັດກັ້ນ, ແຈ້ງຂໍ້ມູນອຸປະຕິເຫດ, ການລັກລອບນຳເຂົ້າ, ການຈຳໜ່າຍ, ການຂົນສົ່ງ ແລະ ນຳໃຊ້ຢາປາບສັດຕູພືດທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ເຂົ້າຮ່ວມໃນການໄກ່ເກ່ຍບັນຫາກ່ຽວກັບຢາປາບສັດຕູພືດພາຍໃນບ້ານ;

5. ເຂົ້າຮ່ວມກອງປະຊຸມສຳມະນາ, ຝຶກອົບຮົມເພື່ອຍົກລະດັບຄວາມຮູ້ກ່ຽວກັບຢາປາບສັດຕູພືດ;

6. ລາຍງານ ແລະ ຈັດຕັ້ງປະຕິບັດວຽກງານກ່ຽວກັບຢາປາບສັດຕູພືດໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານນະຄອນ, ອົງການປົກຄອງບ້ານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 25 ສິດ ແລະ ໜ້າທີ່ຂອງຊາວກະສິກອນໃນການນຳໃຊ້ຢາປາບສັດຕູພືດ

1. ຊາວກະສິກອນມີສິດນຳໃຊ້ຢາປາບສັດຕູພືດຈາກຮ້ານຈຳໜ່າຍ ຫຼື ບໍລິສັດທີ່ໄດ້ຮັບອະນຸຍາດຈາກພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເທົ່ານັ້ນ;

2. ຊາວກະສິກອນຕ້ອງນຳໃຊ້ຢາປາບສັດຕູພືດໃຫ້ຖືກຕ້ອງຕາມຫຼັກວິຊາການ, ຖືກຕ້ອງກັບເປົ້າໝາຍແມງໄມ້ສັດຕູພືດ ແລະ ບໍ່ເປັນຢາປາບສັດຕູພືດທີ່ຕ້ອງຫ້າມ;

3. ໄດ້ຮັບຂໍ້ມູນຂ່າວສານ, ຝຶກອົບຮົມ, ທັດສະນະສຶກສາກ່ຽວກັບຢາປາບສັດຕູພືດຈາກພາກລັດ ແລະ ຜູ້ປະກອບການ;

4. ມີສິດຮ້ອງທຸກຂໍຄວາມເປັນທຳຈາກການນຳໃຊ້ຢາປາບສັດຕູພືດທີ່ເສຍຄຸນ, ປອມແປງ ແລະ ໂຄສະນາບິດເບືອນ ນຳພະແນກກະສິກຳ ແລະ ປ່າໄມ້.

### ມາດຕາ 26 ສິດ ແລະ ໜ້າທີ່ຂອງຜູ້ບໍລິໂພກ

1. ບໍລິໂພກພືດທີ່ມີແຫຼ່ງການຜະລິດທີ່ສະອາດ, ມີຄວາມປອດໄພ, ບໍ່ມີຢາປາບສັດຕູພືດຕົກຄ້າງ ແລະ ຖືກຕ້ອງຕາມຫຼັກໂພສະນາການ;

2. ໃຫ້ຂໍ້ມູນ ແລະ ສະກັດກັ້ນການນຳໃຊ້ຢາປາບສັດຕູພືດທີ່ຕ້ອງຫ້າມ ແລະ ບໍ່ຖືກຕ້ອງຕາມຫຼັກວິຊາການໃຫ້ແກ່ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນເມືອງ ແລະ ຂັ້ນນະຄອນຫຼວງວຽງຈັນ;

3. ເປັນເຈົ້າການສະກັດກັ້ນການບໍລິໂພກພືດທີ່ມີແຫຼ່ງການຜະລິດທີ່ມີຄວາມສ່ຽງຈາກການນຳໃຊ້ຢາປາບສັດຕູພືດຕົກຄ້າງ, ບໍ່ມີຄວາມສະອາດ ແລະ ປອດໄພ;

4. ຫັນການບໍລິໂພກເຂົ້າ, ພືດຜັກ ແລະ ໝາກໄມ້ ທີ່ໄດ້ຮັບການຮັບຮອງຕາມລະບົບການຜະລິດກະສິກຳທີ່ດີ ແລະ ກະສິກຳອິນຊີ ທີ່ຈຳໜ່າຍຢູ່ໃນຕະຫຼາດນະຄອນຫຼວງວຽງຈັນ;

5. ໄດ້ຮັບຂໍ້ມູນຂ່າວສານການນຳໃຊ້ ແລະ ຄວາມເປັນອັນຕະລາຍຂອງຢາປາບສັດຕູພືດຢ່າງຖືກຕ້ອງ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 27 ຂໍ້ຫ້າມທົ່ວໄປ

ປະຕິບັດຕາມ ມາດຕາ 48, ໝວດທີ 6 ຂອງດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ ລົງວັນທີ 24 ສິງຫາ 2017.

### ມາດຕາ 28 ຂໍ້ຫ້າມສຳລັບຜູ້ຈຳໜ່າຍ(ຂາຍ) ຢາປາບສັດຕູພືດ

1. ປະຕິບັດຕາມ ມາດຕາ 49, ໝວດທີ 6 ຂອງດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ ລົງວັນທີ 24 ສິງຫາ 2017.

2. ເພີ່ມເຕີມ:

– ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ອົງການຈັດຕັ້ງສາກົນ ນຳເຂົ້າຢາປາບສັດຕູພືດຜ່ານດ່ານທ້ອງຖິ່ນ ແລະ ດ່ານປະເພນີ.

– ຫ້າມວາງຂາຍຢາປາບສັດຕູພືດໃກ້ກັບອາຫານສັດ, ເຄື່ອງອຸປະໂພກບໍລິໂພກຕ່າງໆ ທີ່ເຫັນວ່າມີຄວາມສ່ຽງໃນການປົນເປື້ອນ;

– ນໍາເຂົ້າ ຫຼື ສັ່ງຊື້ ຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ

ມາດຕາ 29 ຂໍ້ຫ້າມສໍາລັບຜູ້ນໍາໃຊ້ ແລະ ມີໄວ້ຄອບຄອງ

1. ປະຕິບັດຕາມ ມາດຕາ 50, ໝວດທີ 6 ຂອງດໍາລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ ລົງວັນທີ 24 ສິງຫາ 2017.

2. ເພີ່ມເຕີມ:

ຫ້າມນໍາໃຊ້ຢາປາບສັດຕູພືດ ໃນເຂດທີ່ມີຄວາມສ່ຽງທີ່ກໍ່ໃຫ້ເກີດຄວາມເປັນອັນຕະລາຍ ຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ, ເຊິ່ງກໍານົດໄວ້ດັ່ງນີ້:

– ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໃນໄລຍະ 100 ແມັດ

## ໝວດທີ 7
## ແຫຼ່ງລາຍຮັບ ແລະ ລາຍຈ່າຍວຽກງານການຄຸ້ມຄອງຢາປາບສັດຕູພືດ

ມາດຕາ 30 ແຫຼ່ງລາຍຮັບ

– ງົບປະມານຂອງລັດ.

– ການແບ່ງປັນຄ່າປັບໃໝຜູ້ລະເມີດ

– ຄ່າບໍລິການຂອງຜູ້ປະກອບການດໍາເນີນທຸລະກິດຢາປາບສັດຕູພືດ;

– ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

– ການຊ່ວຍເຫຼືອຈາກ ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 31 ລາຍຈ່າຍ

– ລົງກວດກາສະຖານທີ່ຜະລິດ, ຮ້ານຈໍາໜ່າຍ, ສາງເກັບມຽ້ນ, ການໂຄສະນາ, ການນໍາເຂົ້າ, ການຂົນສົ່ງ ການສົ່ງອອກ ແລະ ສະຖານທີ່ການນໍາໃຊ້ຢາປາບສັດຕູພືດທີ່ເຫັນວ່າບໍ່ຖືກຕ້ອງຕາມລະບຽບການ

– ການສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;

– ຈ່າຍເຂົ້າໃນການຈັດກອງປະຊຸມປະຈໍາ ໄຕມາດ, ປະຈໍາປີ ຂອງຄະນະກໍາມະການຄຸ້ມຄອງຢາປາບສັດຕູພືດ;

– ການໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບພິນຮ້າຍ ແລະ ການຫຼຸດຜ່ອນການນໍາໃຊ້ຢາປາບສັດຕູພືດ.

ມາດຕາ 32 ການສ້າງລາຍຮັບ ແລະ ລາຍຈ່າຍ ໃນວຽກງານຄຸ້ມຄອງຢາປາບສັດຕູພືດໃຫ້ເປັນໄປຕາມລະບຽບການເງິນຂອງລັດວາງອອກ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 33 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ປະຕິບັດຕາມ ມາດຕາ 65, 66, 67, 68, 69, 70, 71, ໝວດທີ 10 ຂອງດໍາລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ ລົງວັນທີ 24 ສິງຫາ 2017.

ນອກຈາກມາດຕະການ ທີ່ກຳນົດໄວ້ໃນດຳລັດ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ຜູ້ລະເມີດຍັງຕ້ອງປະຕິບັດມາດຕະການໂທດເພີ່ມ ເປັນຕົ້ນ ການໂຈະ ຫຼື ຖອນໃບອະນຸຍາດລົງທຶນ ຫຼື ໃບທະບຽນວິສາຫະກິດຕາມແຕ່ກໍລະນີ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 34 ການຈັດຕັ້ງປະຕິບັດ

34.1. ພະແນກກະສິກຳ ແລະ ປ່າໄມ້ ເປັນຜູ້ອຳນວຍຄວບຄຸມ, ຈັດຕັ້ງປະຕິບັດ ແລະ ເປັນເຈົ້າການ ແລະ ປະສານສົມທົບກັບພະແນກການອ້ອມຂ້າງ, ອົງການປົກຄອງ, ບ້ານ ທຸກພາກສ່ວນທີ່ກ່ຽວຂ້ອງ, ບໍລິສັດ, ຜູ້ປະກອບການ ແລະ ປະຊາຊົນ ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

34.2. ພະແນກການ-ອົງການກ່ຽວຂ້ອງອື່ນ ເປັນຜູ້ປະຕິບັດຕາມພາລະບົດບາດສິດໜ້າທີ່ຂອງຂະແໜງການຕົນ ແລະ ຕາມໝວດທີ VI ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 35 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນ ແລະ ຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການຂອງນະຄອນຫຼວງວຽງຈັນ 60 ວັນ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

**ປອ.ສິນລະວົງ ຄຸດໄພທູນ**

ບ່ອນສົ່ງ:

| | | |
|---|---|---|
| – | ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ | 03 ສະບັບ |
| – | ທຸກຫ້ອງການກະຊວງ, ອົງການອ້ອມຂ້າງສູນກາງພັກ | 01 ສະບັບ |
| – | ສະພາປະຊາຊົນ ນວ | 01 ສະບັບ |
| – | ທຸກພະແນກການ ແລະ ອົງການທຽບເທົ່າອ້ອມຂ້າງ ນວ | 01 ສະບັບ |
| – | ທຸກເມືອງອ້ອມຂ້າງ ນວ | 01 ສະບັບ |
| – | ເກັບມ້ຽນ | 01 ສະບັບ |